ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0288/ອຄ. ສລທ

ນະຄອນຫຼວງວຽງຈັນ, ວັນທີ 08 ກຸມພາ 2012

# ບົດແນະນຳ

## ກ່ຽວກັບການແກ້ໄຂບັນຫາຊາວຕ່າງປະເທດທີ່ທຳມາຄ້າຂາຍຢູ່ ສປປ ລາວ

- ອີງຕາມກົດໝາຍວ່າດ້ວຍວິສາຫະກິດ, ສະບັບເລກທີ 11/ສພຊ, ລົງວັນທີ 9 ພະຈິກ 2005 ;
- ອີງຕາມລະບຽບ ກົດໝາຍຕ່າງໆ ທີ່ກ່ຽວຂ້ອງ ຂອງ ສປປ ລາວ ;
- ອີງຕາມມະຕິຕົກລົງ, ເລກທີ 03/ລບ, ລົງວັນທີ 16 ມີນາ 2011, ກ່ຽວກັບທິດທາງ ແລະ ວິທີການແກ້ໄຂບັນຫາຊາວຕ່າງປະເທດທີ່ທຳມາຫາກິນດ້ວຍການຄ້າຂາຍ ແລະ ອອກແຮງງານຮັບຈ້າງ ຢູ່ ສປປ ລາວ ;
- ອີງໃສ່ກອງປະຊຸມຄະນະຮັບຜິດຊອບແກ້ໄຂບັນຫາຊາວຕ່າງປະເທດທີ່ທຳມາຫາກິນດ້ວຍການຄ້າຂາຍ ແລະ ອອກແຮງງານຮັບຈ້າງຢູ່ ສປປ ລາວ, ຄັ້ງວັນທີ 10 ມັງກອນ 2012.

ເພື່ອໃຫ້ການຈັດຕັ້ງປະຕິບັດ ສອດຄ່ອງກັບລະບຽບ ກົດໝາຍ ແລະ ພັນທະກໍລະນີທີ່ກ່ຽວຂ້ອງ ຊຶ່ງ ສປປ ລາວ ໄດ້ຕົກລົງ ພາຍໃຕ້ຂອບຂອງອາຊຽນ ແນໃສ່ເຮັດໃຫ້ຊາວຕ່າງປະເທດ ທີ່ເຂົ້າມາລົງທຶນ ຫລື ປະກອບອາຊີບຢູ່ປະເທດເຮົາໄດ້ປະຕິບັດຢ່າງຖືກຕ້ອງ ທັງເປັນການປົກປ້ອງຜົນປະໂຫຍດ ແລະ ອາຊີບ ທີ່ເປັນມູນເຊື້ອ ຫລື ຈຳເປັນຂັ້ນພື້ນຖານສຳລັບການດຳລົງຊີບ ໃຫ້ແກ່ພົນລະເມືອງລາວບັນດາເຜົ່າ.

ກະຊວງອຸດສາຫະກຳ ແລະ ການຄ້າ ອອກບົດແນະນຳລະອຽດເພີ່ມເຕີມ ເພື່ອເປັນພື້ນຖານ ແລະ ຮັບປະກັນຄວາມເປັນເອກະພາບ ໃນການຈັດຕັ້ງປະຕິບັດເນື້ອໃນ ຈິດໃຈ ຂໍ້ 1 (1.1 ແລະ 1.2) ມາດຕາ 2 ຂອງມະຕິຕົກລົງ, ສະບັບເລກທີ 03/ລບ ດັ່ງນີ້ :

### I ຂໍ້ຫ້າມ ຫລື ເງື່ອນໄຂຂໍ້ຈຳກັດສຳລັບຄົນຕ່າງປະເທດ ທີ່ປະກອບທຸລະກິດ ຢູ່ ສປປ ລາວ

ສປປ ລາວ ສ້າງທຸກເງື່ອນໄຂ ເອື້ອອຳນວຍ ເພື່ອສົ່ງເສີມການລົງທຶນຂອງຕ່າງປະເທດ ປະກອບສ່ວນເຂົ້າໃນການສ້າງສາພັດທະນາປະເທດຊາດ ໂດຍສອດຄ່ອງກັບລະບຽບ ກົດໝາຍ.

ບາງອາຊີບ ຫລື ທຸລະກິດທີ່ມີຄວາມຈຳເປັນ ຈະໄດ້ຮັບການສະຫງວນໄວ້ ສຳລັບພົນລະເມືອງລາວເທົ່ານັ້ນ. ນອກຈາກນີ້, ຍັງມີບາງປະເພດທຸລະກິດ ທີ່ລັດສົ່ງເສີມນັກລົງທຶນຕ່າງປະເທດ ພາຍໃຕ້ເງື່ອນໄຂ ສະເພາະຢ່າງໃດຢ່າງໜຶ່ງ ຕາມທີ່ກຳນົດໄວ້ໃນລະບຽບ ກົດໝາຍທີ່ກ່ຽວຂ້ອງ.

ກ. ອາຊີບ ຫລື ທຸລະກິດສະຫງວນໄວ້ສຳລັບພົນລະເມືອງລາວ

1. ອາຊີບ ຫລື ທຸລະກິດສະຫງວນສຳລັບພົນລະເມືອງ ແມ່ນອາຊີບ ຫລື ທຸລະກິດ ທີ່ກົດໝາຍຂອງ ແຕ່ລະປະເທດ ກຳນົດໄວ້ສະເພາະໃຫ້ພົນລະເມືອງຂອງຕົນ ຫລື ເວົ້າອີກຢ່າງໜຶ່ງຫ້າມຄົນຕ່າງປະເທດເຮັດ ເພື່ອ :
   - ໃຫ້ພົນລະເມືອງຂອງຕົນ ໄດ້ມີວຽກເຮັດງານທຳ ມີລາຍໄດ້ລ້ຽງຊີບ ຂັ້ນພື້ນຖານ ໃນອາຊີບ ຫລື ທຸລະກິດທີ່ປະກອບທຸລະກິດງ່າຍ ບໍ່ສະລັບຊັບຊ້ອນ ຫລື ບໍ່ໃຊ້ທຶນຮອນຫຼາຍ ;
   - ປົກປ້ອງອາຊີບ ຫລື ທຸລະກິດ ທີ່ພົນລະເມືອງຂອງຕົນມີຄວາມຖະນັດ ມີມູນເຊື້ອໃນການປະກອບອາຊີບ ອັນຍາວນານໃຫ້ຄົງຢູ່.

2. ໜຶ່ງໃນຫຼາຍໆອາຊີບ ຫລື ທຸລະກິດທີ່ບັນດາປະເທດສະຫງວນໄວ້ສຳລັບພົນລະເມືອງຂອງຕົນແມ່ນ : ອາຊີບ ຫລື ທຸລະກິດການຄ້າຂາຍຍ່ອຍ, ເນື່ອງຈາກວ່າ : ທຸລະກິດການຄ້າຂາຍຍ່ອຍ ເປັນຈຸລັງພື້ນຖານຂອງລະບົບເສດຖະກິດທີ່ສອດແຊກ ແລະ ໃກ້ຊິດກັບທຸກສ່ວນຂອງເສດຖະກິດ, ບຸກຄົນ ແລະ ຄົວເຮືອນ;

3. ໃນຂອບຂໍ້ຕົກລົງອາຊຽນ, ປະເທດເຮົາ ກໍ່ບໍ່ໄດ້ຕົກລົງເປີດທຸລະກິດການຄ້າຂາຍຍ່ອຍ ພາຍໃຕ້ໂໝດສາມ ຊຶ່ງບັນດາປະເທດຕ່າງໆ ກໍ່ປະຕິບັດເຊັ່ນກັນ ຫລື ເປີດໃນລະດັບຈຳກັດທີ່ສຸດ ເທົ່ານັ້ນ ;

4. ສຳລັບປະເທດເຮົາ, ອາຊີບ ຫລື ທຸລະກິດທີ່ສະຫງວນໄວ້ໃຫ້ພົນລະເມືອງລາວ ຊຶ່ງມີນິຕິກຳດັດສົມ ໃນປະຈຸບັນ ປະກອບດ້ວຍ :
   - ທຸລະກິດການຄ້າຂາຍຍ່ອຍ (ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງ, ສະບັບເລກທີ 1817/ອຄ.ຄພນ, ລົງວັນທີ 20 ກັນຍາ 2011 - ຄັດຕິດມາພ້ອມນີ້) ;
   - ທຸລະກິດທີ່ບໍ່ຈຳເປັນຂຶ້ນທະບຽນວິສາຫະກິດ (ຕາມທີ່ໄດ້ກຳນົດໄວ້ໃນແຈ້ງການເລກ ທີ 1836/ອຄ, ລົງວັນທີ 4 ພະຈິກ 2008 - ຄັດຕິດມາພ້ອມນີ້) ;
   - ອາຊີບ ຫລື ທຸລະກິດອື່ນທີ່ຈະສະຫງວນໄວ້ສຳລັບພົນລະເມືອງລາວ ແລະ ປະເພດທຸລະກິດ ທີ່ມີເງື່ອນໄຂ ສຳລັບຄົນຕ່າງປະເທດ ຈະມີລະບຽບການເພີ່ມເຕີມ ກຳນົດອອກຕ່າງຫາກ.

ຂ. ປະເພດທຸລະກິດ ທີ່ມີເງື່ອນໄຂ ສຳລັບຄົນຕ່າງປະເທດ

1. ປະເພດທຸລະກິດ ທີ່ມີເງື່ອນໄຂ ສຳລັບຄົນຕ່າງປະເທດ ແມ່ນປະເພດທຸລະກິດ ທີ່ອະນຸຍາດໃຫ້ຄົນຕ່າງປະ

ເທດ ປະກອບທຸລະກິດ ຫລື ຂຶ້ນທະບຽນວິສາຫະກິດໄດ້ ແຕ່ມີຂອບເຂດເງື່ອນໄຂ ຈຳກັດບາງຢ່າງ (ເຊັ່ນ : ໃຫ້ຖືຮຸ້ນບໍ່ເກີນ 49% ຂອງທຶນວິສາຫະກິດ ດັ່ງນີ້ເປັນຕົ້ນ) ;

2. ໃນຂອບຂອງອາຊຽນ, ປະເທດເຮົາກໍ່ໄດ້ ຕົກລົງເປີດ ໃນອັດຕາສ່ວນທຶນທີ່ແນ່ນອນໃດໜຶ່ງ ຕໍ່ບາງປະເພດທຸລະກິດ ສຳລັບຜູ້ລົງທຶນຕ່າງປະເທດ (ລາຍລະອຽດ ຈະແຈ້ງໃຫ້ຊາບພາຍຫຼັງ).

ຄ. ມາດຕະການແກ້ໄຂຕໍ່ຊາວຕ່າງປະເທດທີ່ທຳມາຄ້າ ຂາຍບໍ່ຖືກຕ້ອງ

ບົນພື້ນຖານລະບຽບ ກົດໝາຍທີ່ກ່ຽວຂ້ອງ, ມະຕິຕົກລົງ 03/ລບ ແລະ ເນື້ອໃນຈິດໃຈທີ່ກ່າວມາຂ້າງເທິງນີ້, ມາດຕະການແກ້ໄຂຊາວຕ່າງ ປະເທດທີ່ທຳມາຄ້າຂາຍບໍ່ຖືກຕ້ອງ ຢູ່ປະເທດເຮົາ ໃຫ້ປະຕິບັດ ດັ່ງນີ້ :

1. ຜູ້ທີ່ປະກອບທຸລະກິດທຳມາຄ້າຂາຍ ນັບແຕ່ມະຕິຕົກລົງ ເລກທີ 03/ລບ ມີຜົນສັກສິດ ( ຫລື ນັບແຕ່ ວັນທີ 16 ມີນາ 2011) ເປັນຕົ້ນມາ ແມ່ນໃຫ້ປະຕິບັດຕາມກົດໝາຍສົ່ງເສີມການລົງທຶນ ແລະ ຂຶ້ນທະບຽນວິສາຫະກິດ ໃຫ້ຖືກຕ້ອງຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ເຊັ່ນດຽວກັບຜູ້ລົງທຶນຕ່າງປະເທດທົ່ວໄປ ບໍ່ໃຫ້ອະນຸໂລມເດັດຂາດ;

2. ຜູ້ທີ່ປະກອບທຸລະກິດທຳມາຄ້າຂາຍ ນັບແຕ່ມະຕິຕົກລົງ ເລກທີ 03/ລບ ມີຜົນສັກສິດ ( ຫລື ນັບແຕ່ ວັນທີ 16 ມີນາ 2011) ຄືນຫຼັງ ແມ່ນໃຫ້ດຳເນີນການ ຕາມມາດຕະການແກ້ໄຂ ແບບອະນຸໂລມ ຊົ່ວຄາວ ລຸ່ມນີ້ :

2.1. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງ ແລະ ຫ້ອງການອຸດສາຫະກຳ ແລະການຄ້າຂັ້ນເມືອງ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະອົງການປົກຄອງທ້ອງຖິ່ນ ເພື່ອເກັບກຳຈຳນວນ ສະຖິຕິ ຊາວຕ່າງປະເທດທີ່ປະກອບອາຊີບທຳມາຄ້າຂາຍ ໃຫ້ຄົບຖ້ວນ ແລະ ຊັດເຈນ ແລ້ວແຍກຈຳນວນທີ່ເກັບກຳໄດ້ນັ້ນ ອອກເປັນ 2 ສ່ວນ ຄື:

**ສ່ວນທີ່ໜຶ່ງ – ຜູ້ທີ່ມີເງື່ອນໄຂຖືກຕ້ອງ :**

1) ຜູ້ທີ່ມີເງື່ອນໄຂຖືກຕ້ອງໝາຍເຖິງບຸກຄົນທີ່ມີອົງປະກອບ ສາມປະການ ລວມກັນຄື : 1) ບໍ່ມີປະເດັນທຸລະກິດ ຂັດກັບລະບຽບ ກົດໝາຍທີ່ກ່ຽວຂ້ອງສຳລັບຜູ້ລົງທຶນຕ່າງປະເທດ ເຊັ່ນ : ບໍ່ຂັດກັບຂໍ້ຈຳກັດໃດໜຶ່ງ ດັ່ງນີ້ເປັນຕົ້ນ ; 2) ມີທຶນຕ່ຳສຸດ ຕາມທີ່ໄດ້ບົ່ງໄວ້ໃນກົດໝາຍທີ່ກ່ຽວຂ້ອງ ໂດຍສະເພາະແມ່ນກົດ ໝາຍສົ່ງເສີມການລົງທຶນ ແລະ 3) ບໍ່ແມ່ນອາຊີບ ຫລື ທຸລະກິດທີ່ສະຫງວນໄວ້ສຳລັບພົນລະເມືອງລາວ ;

2) ຕໍ່ຜູ້ທີ່ມີເງື່ອນໄຂຖືກຕ້ອງ ແມ່ນໃຫ້ພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງ ຫລື ຫ້ອງການອຸດສາຫະກຳ ແລະ ການຄ້າຂັ້ນເມືອງ ປະສານກັບອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງຂັ້ນຂອງຕົນ ຊ່ວຍຂະເຈົ້າ ເພື່ອຂຶ້ນທະບຽນວິສາຫະກິດ ແລະ ປະກອບເອກະສານທີ່ກ່ຽວຂ້ອງອື່ນໆໃຫ້ຖືກຕ້ອງ ຕາມລະບຽບ ກົດໝາຍ ;

3) ຫ້າມເດັດຂາດບໍ່ໃຫ້ຂຶ້ນທະບຽນວິສາຫະກິດ ໃຫ້ຄົນຕ່າງປະເທດໃນອາຊີບ ຫລື ທຸລະກິດທີ່ລະບຽບ ກົດ
ໝາຍກຳນົດ ເພື່ອສະຫງວນໄວ້ສຳລັບພົນລະເມືອງລາວ ໃນກໍລະນີລະເມີດ ຈະຖືກປະຕິບັດມາດຕະການ
ຕາມທີ່ໄດ້ບົ່ງໄວ້ໃນມາດຕາ 238 ຂອງກົດໝາຍວ່າດ້ວຍວິສາຫະກິດຢ່າງເຂັ້ມງວດ.

**ສ່ວນທີສອງ - ຜູ້ທີ່ຍັງບໍ່ທັນມີເງື່ອນໄຂຖືກຕ້ອງ :**

ຜູ້ທີ່ຍັງບໍ່ທັນມີເງື່ອນໄຂຖືກຕ້ອງ ໃຫ້ອອກໃບອະນຸຍາດດຳເນີນທຸລະກິດຊົ່ວຄາວ (ອະນຸໂລມ ທັງອາຊີບສະ
ຫງວນ) ພາຍໃນກຳນົດເວລາສັ້ນເທົ່າໃດຍິ່ງດີ ແລະ ສູງສຸດບໍ່ໃຫ້ເກີນ 2 ປີ (ຫ້າມຕໍ່ເດັດຂາດ) ໂດຍມີ
ເງື່ອນໄຂໃຫ້ປະຕິບັດ ດັ່ງນີ້:

1) ເສັຍພັນທະຕ່າງໆ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ ເຊັ່ນດຽວກັບວິສາຫະກິດທົ່ວໄປ;

2) ໃຫ້ປັບປຸງ ແກ້ໄຂໃຫ້ສອດຄ່ອງກັບເນື້ອໃນ ຈິດໃຈ ຕາມທີ່ໄດ້ກ່າວມາໃນຂໍ້ 1 ສ່ວນທີ່ໜຶ່ງ ຂໍ້ 2.1 ຖັດເທິງ
ນີ້ ເພື່ອຂຶ້ນທະບຽນວິສາຫະກິດ ແລະ ດຳເນີນການດ້ານອື່ນໆທີ່ກ່ຽວຂ້ອງໃຫ້ຖືກຕ້ອງ ;

3) ເມື່ອເຖິງກຳນົດເວລາ ແຕ່ບໍ່ສາມາດປັບປຸງໃຫ້ຖືກຕ້ອງໄດ້ ຫລື ບໍ່ທັນເຖິງກຳນົດເວລາ ແຕ່ມີການຝ່າຝືນ
ລະເມີດ ລະບຽບ ກົດໝາຍ ໃຫ້ຢຸດເຊົາການດຳເນີນທຸລະກິດ, ລຶບລ້າງໃບອະນຸຍາດ ແລະ ເງື່ອນໄຂຕ່າງໆ
ເພື່ອບໍ່ໃຫ້ເປັນຂໍ້ອ້າງໃນການຢູ່ ຫລື ເຮັດທຸລະກິດຕໍ່ ໄປພ້ອມກັບມາດຕະການທີ່ເຂັ້ມງວດ ຫາກລະເມີດຂໍ້
ກຳນົດ ຕາມທີ່ໄດ້ບົ່ງໄວ້ໃນສັນຍາ (ແບບຟອມໃບອະນຸຍາດ ດຳເນີນທຸລະກິດຊົ່ວຄາວ ຄັດຕິດມາພ້ອມນີ້).

3. ບຸກຄົນທີ່ມອບທະບຽນວິສາຫະກິດຂອງຕົນໃຫ້ແກ່ຄົນຕ່າງປະເທດທີ່ເຂົ້າມາ ຫລື ດຳລົງຊີວິດຢູ່ ສປປ ລາວ
ໂດຍບໍ່ສອດຄ່ອງກັບລະບຽບ ກົດໝາຍ ຕ້ອງຮັບຜິດຊອບຕໍ່ການກະທຳຮ່ວມກັນ ກັບບຸກຄົນດັ່ງກ່າວ. ການ
ດຳເນີນທຸລະກິດຂອງບຸກຄົນຕ່າງປະເທດດັ່ງກ່າວນັ້ນ ຖືວ່າເປັນການດຳເນີນທຸລະກິດ ໂດຍບໍ່ມີທະບຽນວິສາ
ຫະກິດ (ມາດຕາ 24 ກົດໝາຍວິສາຫະກິດ) ແລະ ຈະຕ້ອງປະຕິບັດມາດຕະການ ຕາມທີ່ໄດ້ບົ່ງໄວ້ໃນ
ມາດ 236 ຢ່າງເຂັ້ມງວດ ;

4. ຫຼັງຈາກ ເກັບກຳຈຳນວນສະຖິຕິ ແລະ ແຍກລະອຽດແລ້ວ ໃຫ້ປະສານກັບອົງການປົກຄອງທ້ອງຖິ່ນ ເພື່ອປະ
ກາດໄລຍະເວລາ, ແນະນຳ ແລະ ຊ່ວຍໃຫ້ຜູ້ທີ່ມີເງື່ອນໄຂຖືກຕ້ອງມາຂຶ້ນທະບຽນວິສາຫະກິດ ແລະ ຜູ້ທີ່ຍັງບໍ່
ທັນມີເງື່ອນໄຂຖືກຕ້ອງ ມາເຮັດໃບອະນຸຍາດດຳເນີນທຸລະກິດຊົ່ວຄາວ ແລະ ເຮັດສັນຍາ;

5. ຜູ້ທີ່ບໍ່ມາເຮັດ ໂດຍເຫດອັນບໍ່ສົມຄວນ ໃຫ້ຖືວ່າຜູ້ກ່ຽວດຳເນີນທຸລະກິດ ໂດຍບໍ່ມີທະບຽນວິສາຫະກິດ ແລະ
ໃຫ້ດຳເນີນມາດຕະການຢ່າງເຂັ້ມງວດ ຕາມທີ່ໄດ້ບົ່ງໄວ້ ໃນມາດຕາ 236 ຂອງກົດໝາຍວິສາຫະກິດ ສ່ວນ
ມາດຕະການດ້ານອື່ນ ກໍໃຫ້ເປັນໄປຕາມດຸນພິນິດ ຂອງພາກສ່ວນ ຫລື ລະບຽບ ກົດໝາຍທີ່ກ່ຽວຂ້ອງ ;

6. ໃຫ້ປະສານກັບພາກສ່ວນຕ່າງໆ ໂດຍສະເພາະອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ສຶກສາອົບຮົມ ໃຫ້ປະຊາຊົນ ເຂົ້າໃຈ, ເປັນຫູເປັນຕາ ແລະ ໃຫ້ຄວາມຮ່ວມມື ໃນການບໍ່ອະນຸຍາດສະຖານທີ່ (ເຊັ່ນ : ໃຫ້ເຊົ່າ) ໃຫ້ຜູ້ທີ່ບໍ່ປະຕິບັດ ຕາມກຳນົດເວລາດັ່ງທີ່ໄດ້ກ່າວມາໃນ ຂໍ້ 5 ຖັດເທິງນີ້ ແລະ ກຳນົດເວລາຕາມທີ່ໄດ້ບົ່ງໄວ້ໃນໃບອະນຸຍາດດຳເນີນທຸລະກິດຊື່ວຄາວ.

## II. ການຈັດຕັ້ງປະຕິບັດບົດແນະນຳ

ເພື່ອຈັດຕັ້ງປະຕິບັດມະຕິຕົກລົງ ເລກທີ 03/ລບ ແລະ ບົດແນະນຳສະບັບນີ້ ໃຫ້ໄດ້ຮັບຜົນດີ , ພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າຂັ້ນເມືອງ ຕ້ອງເປັນການ ເຈົ້າປະສານ ສົມທົບຢ່າງໃກ້ຊິດ ກັບບັນດາພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະແມ່ນ:

- ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອຍາດແຍ່ງທິດຊີ້ນຳ ຢ່າງເປັນປະຈຳ ຫລື ຊ່ວຍເປັນກຳແຮງນຳພາດ້ານແນວຄິດ ໃຫ້ກັບປະຊາຊົນໄດ້ເຂົ້າໃຈ ແລະ ມີສ່ວນຮ່ວມ;
- ພາກສ່ວນ ປກສ, ພາສີ, ສ່ວຍສາອາກອນ ແລະ ບັນດາຂະແໜງການທີ່ກ່ຽວຂ້ອງ ເພື່ອມີແນວທາງ ແລະ ມາດຕະການທີ່ເປັນເອກະພາບຮ່ວມກັນ ເປັນຕົ້ນແມ່ນໃນກໍລະນີ ຕ້ອງດຳເນີນມາດຕະການຕໍ່ການລະເມີດ ຕາມລະບຽບ ກົດໝາຍ ຫລື ການຫຼີກເວັ້ນຊ່ອງຫວ່າງຕ່າງໆ ທີ່ອາດເປັນເງື່ອນໄຂໃຫ້ເປັນຂໍ້ອ້າງ ດັ່ງນີ້ເປັນຕົ້ນ.

ໃນເວລາຈັດຕັ້ງປະຕິບັດຫາກພົບບັນຫາ ໃຫ້ລາຍງານຂໍທິດຊີ້ນຳຢ່າງເປັນປະຈຳຈາກຂັ້ນເທິງ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ

ດຣ. ນາມ ວິຍະເກດ

ຄັດຕິດມາພ້ອມນີ້ :

- ແບບຟອມໃບອະນຸຍາດດຳເນີນທຸລະກິດ ຊົ່ວຄາວ;
- ແບບຟອມສັນຍາຄ້ຳປະກັນການປະຕິບັດ
- ຂໍ້ຕົກລົງ, ສະບັບເລກທີ 1817/ອຄ.ຄພນ ;
- ແຈ້ງການເລກ ທີ 1836/ອຄ.